ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR

# ຂ່າວ NEWS

ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283






## ທຫລ ປາຖະກະຖາວັນສ້າງຕັ້ງກຳລັງ ປກສ ຄົບຮອບ 60 ປີ

ໃນວັນທີ 26 ມີນາ 2021 ນີ້ ຢູ່ທີ່ສະຖາບັນການທະນາຄານ, ນະຄອນຫຼວງວຽງຈັນ ໄດ້ຈັດຕັ້ງ ພິທີປາຖະກະຖາວັນສ້າງຕັ້ງກຳລັງປ້ອງກັນຄວາມສະຫງົບປະຊາຊົນ (ປກສ) ຄົບຮອບ 60 ປີ ໂດຍໃຫ້ກຽດປາຖະກະຖາຂອງທ່ານ ພົນຕີ ບຸນມີ ແສງຄຳປອງ ອາດີດຫົວໜ້າກົມໃຫຍ່ສັນຕິບານ ແລະ ສະຫາຍ ນາງ ຂັນແກ້ວ ຫຼ້າມະນີເງົາ ກຳມະການພັກ ທຫລ, ມີບັນດາສະຫາຍ, ບັນດາສະຫາຍຄະນະພັກ-ຄະນະໜ່ວຍພັກຮາກຖານ ພ້ອມດ້ວຍພະນັກງານຫຼັກແຫຼ່ງນຳພາ ອ້ອມຂ້າງອົງຄະນະພັກ ທຫລ ເຂົ້າຮ່ວມຢ່າງພ້ອມພຽງ.



ການຈັດຕັ້ງປາຖະກະຖາວັນສ້າງຕັ້ງກຳລັງ ປກສ ປະຊາຊົນ ຄົບຮອບ 60 ປີ (05 ເມສາ 1961 - 05 ເມສາ 2021) ເພື່ອແນໃສ່ເຮັດໃຫ້ຖັນແຖວສະມາຊິກພັກ-ພະນັກງານແຕ່ລະຂັ້ນ ອ້ອມຂ້າງອົງຄະນະພັກ ທທລ ເຫັນໄດ້ມູນເຊື້ອແຫ່ງການເຄື່ອນໄຫວຕໍ່ສູ້ອົງອາດກ້າຫານ ປະກອບສ່ວນເຂົ້າໃນໄຊຊະນະລວມຂອງພາລະກິດຕໍ່ສູ້ປົດປ່ອຍຊາດ ກໍ່ຄືພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ຂອງກຳລັງ ປກສ ປະຊາຊົນ ຮ່ວມກັບກອງທັບປະຊາຊົນລາວໃນຕະຫຼອດ ໄລຍະ 60 ປີ ຜ່ານມາ ພາຍໃຕ້ການນຳພາອັນສະຫຼາດສ່ອງໃສຂອງພັກປະ ຊາຊົນປະຕິວັດລາວ.



ໃນຕອນທ້າຍ ສະຫາຍ ນ ຂັນແກ້ວ ຫຼ້າມະນີເງິາ ກໍ່ໄດ້ສະແດງຄວາມຂອບໃຈ ແລະ ຕີລາຄາສູງຕໍ່ກຳລັງປ້ອງກັນຄວາມສະຫງົບຕະຫຼອດໄລຍະ 60 ປີ ທີ່ໄດ້ກຳເນີນ ແລະ ເຄື່ອນໄຫວໃນແປວໄຟສົງຄາມ ແລະ ແຕ່ມື້ຕໍ່ສູ້ປົດປ່ອຍຊາດ ຈົນເຖິງປົກປັກຮັກສາປະເທດຊາດ.

ການຈັດຕັ້ງປາຖະກະຖາວັນສ້າງຕັ້ງກຳລັງປ້ອງກັນຄວາມສະຫງົບປະຊາຊົນ ຄົບຮອບ 60 ປີ ໄດ້ດຳເນີນໄປເປັນເວລາເຄິ່ງວັນ.

**# ພາບ-ຂ່າວ: ສົມອົກ ເຄນຄຳແພງ**

**ໃຊ້ເງິນກີບທົ່ວທັງຊາດ ສ້າງບົດບາດຄ່າເງິນລາວ**